ໃນເດືອນ 02/1998. ສປປ ລາວ ສຳເລັດບົດຊ່ວຍຈຳກ່ຽວກັບ ລະບອບການຄ້າຕ່າງປະເທດ ໃນເດືອນ 03/2001, ຕອບຄຳຖາມຊຸດທຳອິດ (263 ຂໍ້) ໃນປີ 2003, ຊຸດທີສອງ (101 ຂໍ້) ໃນປີ 2004, ຊຸດທີສາມ (159 ຂໍ້) ໃນເດືອນ 07/2007, ຊຸດທີສີ່ (94 ຂໍ້) ແລະ ຊຸດທີຫ້າ (50 ຂໍ້) ໃນເດືອນ 07/2009 ແລະ ຍື່ນເອກະສານອື່ນໆ ເຊັ່ນ: ແຜນປະຕິບັດງານດ້ານນິຕິກຳຕ່າງໆ ໃຫ້ກອງເລຂາ ອົງການການຄ້າໂລກ. ຈົນເຖິງປະຈຸບັນ ສປປ ລາວ ໄດ້ຈັດກອງປະຊຸມ ໜ່ວຍປະຕິບັດງານເປັນຈຳນວນ 5 ຄັ້ງຄື: ຄັ້ງທຳອິດ ໃນເດືອນ 10/2004, ຄັ້ງທີສອງໃນເດືອນ 11/2006, ຄັ້ງທີສາມ ໃນເດືອນ 11/2007, ຄັ້ງທີສີ່ ໃນເດືອນ 07/2008 ແລະ ຄັ້ງລ້າສຸດ ໃນວັນທີ 07/2009, ຊຶ່ງແຕ່ລະຄັ້ງນຳພາໂດຍລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ.

ຄຽງຄູ່ກັນນັ້ນ, ໄດ້ມີການເຈລະຈາເປີດຕະຫຼາດສິນຄ້າ ແລະ ການບໍລິການແບບສອງຝ່າຍກັບ 9 ປະເທດ (ຫຼື ອານາເຂດພາສີເອກະລາດ) ຄື: ສປ ຈີນ, ການາດາ, ຈີນໄຕ້ ຫວັນ, ສ. ເກົາຫຼີ, ສະຫະລັດອາເມຣິກາ, ສະຫະພາບເອີຣົບ, ອິດສະຕາລີ, ຍີ່ປຸ່ນ ແລະ ຢູເຄຣນ ແລະ ຈະສືບຕໍ່ດຳເນີນການເຈລະຈາ ໃນແຕ່ລະບາດກ້າວຕໍ່ໄປ.

ໃນວັນທີ 11/07/2008 ທ່ານ ນາຍົກລັດຖະມົນຕີ ໄດ້ອອກດຳລັດເລກທີ 118/ນຍ ເພື່ອປັບປຸງ ຄະນະກຳມະການປະສານງານລະດັບຊາດວ່າດ້ວຍ ການເຊື່ອມໂຍງເສດຖະກິດກັບສາກົນ ໃນການເຄື່ອນໄຫວວຽກງານ ການເຈລະຈາການຄ້າ ໃນຂອບສອງຝ່າຍ, ພາກພື້ນ, ຫຼາຍຝ່າຍ ແລະ ໂຄງການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (Integrated Framework: IF) ໂດຍປ່ຽນແທນຄະນະກຳມະການປະສານງານລະດັບຊາດ ທີ່ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1999 ແລະ 2007. ຄະນະກຳມະການ ປະສານງານລະດັບຊາດ (ຄປຊ) ເປັນ ປະທານໂດຍ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ໂດຍທ່ານລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ ແລະ ລັດຖະມົນຕີ ຊ່ວຍວ່າການກະຊວງຂະແໜງການທີ່ກ່ຽວຂ້ອງ ເປັນຄະນະ. ໃນນີ້, ມີການຈັດຕັ້ງ ກອງເລຂາການເຂົ້າເປັນສະມາຊິກ ອຄລ ທີ່ເປັນເສນາທິການເຄື່ອນໄຫວວຽກງານສະເພາະໃນແຕ່ລະດ້ານ.

ສປປ ລາວ ໄດ້ທົບທວນ ແລະ ປັບປຸງນິຕິກຳໃຫ້ສອດຄ່ອງ ກັບຫຼັກການຂອງອົງການການຄ້າໂລກ ຊຶ່ງພົ້ນເດັ່ນແມ່ນ: ກົດໝາຍວ່າດ້ວຍພາສີ (ປີ 2005), ກົດໝາຍວ່າດ້ວຍສວຍສາອາກອນ (ປີ 2005), ກົດໝາຍ ວິສາຫະກິດ (ປີ 2005), ກົດໝາຍ ວ່າດ້ວຍ ອາກອນມູນຄ່າເພີ່ມ (ປີ 2006), ກົດໝາຍ ມາດຕະຖານ (ປີ 2007), ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ປີ 2007), ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ (2009), ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ (2009), ກົດໝາຍວ່າດ້ວຍ ການປ້ອງກັນພືດ (2009), ກົດໝາຍວ່າດ້ວຍ ການປະມົງ (2009), ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ (2009), ດຳລັດວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າ (2009).

ນອກຈາກນີ້ ໃດ້ແລກປ່ຽນບົດຮຽນການເຈລະຈາ ເຂົ້າເປັນສະມາຊິກກັບ ສປ ຈີນ , ສສ ຫວຽດນາມ ແລະ ປະເທດອື່ນໆພ້ອມທັງ ອົງການຈັດຕັ້ງສາກົນຈຳນວນໜຶ່ງ. ຄຽງຄູ່ກັນນັ້ນ, ກໍ່ໄດ້ສຳມະນາເຜີຍແຜ່ ໃຫ້ແກ່ ບັນດາພະນັກງານລັດ, ນັກທຸລະກິດ, ນັກຄົ້ນຄ້ວາ, ອາຈານສອນ ແລະ ສື່ມວນຊົນ ເພື່ອສ້າງຄວາມຮັບຮູ້ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຄວາມສຳຄັນ ຂອງການເຊື່ອມໂຍງເສດຖະກິດກັບສາກົນ, ແນໃສ່ການສ້າງຄວາມເປັນເຈົ້າການ ແລະ ຕັ້ງໜ້າປະກອບສ່ວນຍາດເອົາຜົນປະໂຫຍດສູງສຸດ ກໍຄື ກາລະໂອກາດ ໃນຂະບວນການເຊື່ອມໂຍງດັ່ງກ່າວ ເຊັ່ນ:

- ການຍົກບົດບາດດ້ານການເມືອງໃນເວທີສາກົນໃຫ້ສູງຂຶ້ນ
- ການເພີ່ມອຳນາດໃນການຕໍ່ຮອງທາງດ້ານເສດຖະກິດ
- ການຂະຫຍາຍຕົວທາງດ້ານເສດຖະກິດ
- ການປັບປຸງຄວາມສາມາດດ້ານການແຂ່ງຂັນ
- ການປັບປຸງກົດໝາຍພາຍໃນໃຫ້ສອດຄ່ອງກັບຫລັກການສາກົນ

ຄຽງຄູ່ກັບຜົນປະໂຫຍດ, ສປປ ລາວ ຍັງຕ້ອງໄດ້ປະເຊີນກັບສິ່ງທ້າທາຍຫຼາຍຢ່າງເຊັ່ນ:

- ຕະຫລາດພາຍໃນບໍ່ມີຄວາມພ້ອມໃນການປະເຊີນໜ້າກັບການແຂ່ງຂັນທີ່ນັບມື້ນັບເພີ້ມຂຶ້ນ
- ລະບົບການຄຸ້ມຄອງ/ຄວາມສາມາດດ້ານການຈັດຕັ້ງ ແລະ ສະຖາບັນຍັງບໍ່ມີຄວາມເຂັ້ມແຂງ
- ຄວາມສາມາດໃນການຈັດຕັ້ງປະຕິບັດບັນດາລະບຽບຫລັກການຂອງອົງການການຄ້າໂລກຍັງມີຂໍ້ຈຳກັດ

ສິ່ງສຳຄັນທີ່ສຸດ ແມ່ນຕ້ອງເຂົ້າໃຈວ່າ ຜົນປະໂຫຍດທີ່ກ່າວມາຂ້າງເທິງນັ້ນ ຈະບໍ່ໄດ້ມາໂດຍອັດຕະໂນມັດ ແຕ່ຂຶ້ນກັບຄວາມສາມາດຂອງທຸກພາກສ່ວນທີ່ຍາດເອົາຜົນປະໂຫຍດດັ່ງກ່າວ. ເຊັ່ນດຽວກັນ, ກໍ່ຕ້ອງພະຍາຍາມຫັນປ່ຽນສິ່ງທ້າທາຍໃຫ້ກາຍມາເປັນກາລະໂອກາດ.

ສະໜັບສະໜູນໂດຍ:
ໂຄງການສະໜັບສະໜູນ ສປປ ລາວ ເຂົ້າເປັນຊະມາຊິກ (WTO)
ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP)

ສົນໃຈຂໍ້ມູນເພີ້ມຕື່ມ ກະລຸນາຕິດຕໍ່:
ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ
ໂທ/ແຟັກ: 450066 ອີເມລ: foreigntrade@laopdr.com
www.moic.gov.la ແລະ www.wto.org

# ອົງການການຄ້າໂລກ

World Trade Organization

WTO

ຈັດພິມໂດຍ:
ກົມນະໂຍບາຍການຄ້າຕ່າງປະເທດ
ກະຊວງອຸດສາຫະກຳ ແລະ ການຄ້າ
ມິຖຸນາ 2010

ອົງການການຄ້າໂລກ (ອຄລ) ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 1/1/1995 ຊຶ່ງແມ່ນໝາກຜົນຂອງ ການເຈລະຈາການຄ້າ ໃນຮອບອູຣຸກວາຍ ໂດຍປ່ຽນແທນອົງການແກດ (GATT) ທີ່ໄດ້ຖືກສ້າງຕັ້ງຂຶ້ນ ໃນປີ 1947. ອົງການການຄ້າໂລກ ມີການຂະຫຍາຍຂົງເຂດການຄຸ້ມຄອງ ດ້ານລະບຽບການຄ້າລະຫວ່າງປະເທດ ກວ້າງຂວາງຂຶ້ນ ຊຶ່ງບໍ່ກວມເອົາສະເພາະແຕ່ການຄ້າດ້ານສິນຄ້າ ເທົ່ານັ້ນ ແຕ່ຍັງລວມການຄ້າດ້ານການບໍລິການ ແລະ ຊັບສິນທາງປັນຍາ ຕື່ມອີກ.

ສະມາຊິກຂອງອົງການການຄ້າໂລກ ໄດ້ເພີ່ມຂຶ້ນເລື່ອຍໆ ຈາກ 81 ປະເທດ (ຫຼື ອານາເຂດພາສີເອກະລາດ) ໃນມື້ກໍ່ຕັ້ງ ເປັນ 153 ປະເທດ ໃນວັນທີ 23/7/2008, ໃນນັ້ນ, ມີປະເທດດ້ອຍພັດທະນາ ກວມເຖິງ ປະມານ 2/3 ຂອງສະມາຊິກທັງໝົດ. ອົງການການຄ້າໂລກ ມີສຳນັກງານໃຫຍ່ຕັ້ງຢູ່ ເຈນີວາ, ປະເທດ ສະວິດເຊີແລນ. ຜູ້ອຳນວຍການໃຫ່ຍຄົນປະຈຸບັນແມ່ນ ທ່ານ ປາສະການ ລາມີ ຊຶ່ງໄດ້ເຂົ້າຮັບຕຳແໜ່ງເປັນວາລະທີສອງ ໃນເດືອນ 1/2009.

ອົງການການຄ້າໂລກ ໄດ້ຈັດກອງປະຊຸມ ລະດັບລັດຖະມົນຕີ ມາແລ້ວ 7 ຄັ້ງ, ຊຶ່ງຄັ້ງທີ 7 ຈັດຂຶ້ນທີ່ ເຈນີວາ, ປະເທດ ສະວິດເຊີແລນ ໃນ 12/2009. ປະຈຸບັນ ອົງການການຄ້າໂລກ ກຳລັງເຈລະຈາການຄ້າໃນຮອບການພັດທະນາໂດຮາ ທີ່ເລີ່ມຕົ້ນໃນ ປີ 2001.







## ຫຼັກການພື້ນຖານ ຂອງອົງການການຄ້າໂລກ

### 1. ການບໍ່ຈຳແນກປະຕິບັດ (Non-Discrimination)

1.1. ຫຼັກການປະຕິບັດແບບຊາດທີ່ໄດ້ຮັບການອະນຸເຄາະຍິ່ງ (Most-Favored Nation: MFN): ປະເທດສະມາຊິກຕ້ອງໃຫ້ການປະຕິບັດ ເທົ່າທຽມກັນຕໍ່ສິນຄ້ານຳເຂົ້າ ຈາກທຸກສະມາຊິກ. ໝາຍຄວາມວ່າ ເມື່ອປະເທດໃດໜຶ່ງຫາກຫຼຸດອັດຕາພາສີ ຫຼື ຍົກເລີກມາດຕະການຈຳກັດການຄ້າຕໍ່ສິນຄ້ານຳເຂົ້າຂອງປະເທດສະມາຊິກໃດໜຶ່ງ ປະເທດ ສະມາຊິກດັ່ງກ່າວ ຕ້ອງໄດ້ປະຕິບັດເຊັ່ນດຽວກັນຕໍ່ສິນຄ້ານຳເຂົ້າຊະນິດດຽວກັນທີ່ມາຈາກສະມາຊິກອື່ນໆ.

1.2. ຫຼັກການປະຕິບັດແບບພາຍໃນຊາດ (Natioan Treatment: NT): ໝາຍຄວາມວ່າ ຕ້ອງໃຫ້ການປະຕິບັດຕໍ່ ສິນຄ້ານຳເຂົ້າ (ພາຍຫຼັງທີ່ຊຳລະພາສີຢູ່ດ້ານພາສີແລ້ວ) ຄືກັບສິນຄ້າທີ່ຜະລິດຢູ່ພາຍໃນປະເທດ.

### 2. ການເປີດເສລີທາງດ້ານການຄ້າ (Trade Liberalization)

ເພື່ອເຮັດໃຫ້ມີການຄ້າເສລີ ເທື່ອລະກ້າວນັ້ນ, ປະເທດສະມາຊິກ ຈະດຳເນີນການເຈລະຈາ ແລະ ເປີດຕະຫຼາດສິນຄ້າ ແລະ ຂະແໜງການບໍລິການໃຫ້ແກ່ກັນ ແລະ ກັນບົນຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

### 3. ຄວາມໂປ່ງໃສ (Transparency)

ອົງການການຄ້າໂລກ ມີກົນໄກການທົບທວນນະໂຍບາຍການຄ້າຂອງປະເທດສະມາຊິກ ໂດຍມີຮອບວຽນທຸກໆ 2 ປີ ສຳລັບປະເທດເສດຖະກິດໃຫຍ່, ທຸກໆ 4 ປີ ສຳລັບປະເທດກຳລັງພັດທະນາ ແລະ ທຸກໆ 6 ປີ ສຳລັບປະເທດດ້ອຍພັດທະນາ ຄວາມໂປ່ງໃສຍັງໝາຍເຖິງການສະໜອງຂໍ້ມູນຂ່າວສານທີ່ເປີດເຜີຍໂດຍຜ່ານກົນໄກ ແຈ້ງການ ແລະ ຈຸດສອບຖາມເພື່ອໃຫ້ສາທາລະນະຊົນ ແລະ ສະມາຊິກ ອຄລ ໄດ້ຮັບຊາບກ່ຽວກັບລະບຽບກົດໝາຍ ແລະ ມາດຕະການທີ່ສົ່ງຜົນກະທົບຕໍ່ການຄ້າ.

### 4. ການປະຕິບັດນະໂຍບາຍແບບພິເສດ ແລະ ແຕກຕ່າງ (S&D)

ເພື່ອຮັບປະກັນໃຫ້ທຸກປະເທດສະມາຊິກ ໂດຍສະເພາະປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາໄດ້ຮັບປະໂຫຍດຈາກລະບົບການຄ້າຫຼາຍຝ່າຍ, ອົງການການຄ້າໂລກມີນະໂຍບາຍພິເສດ ແລະ ແຕກຕ່າງຕໍ່ປະເທດເຫຼົ່ານີ້ ຊຶ່ງສະແດງອອກໃນການອະນຸຍາດ ມີໄລຍະຜ່ອນຜັນການຈັດຕັ້ງປະຕິບັດພັນທະທີ່ດົນກວ່າ ແລະ ໃຫ້ການຊ່ວຍເຫຼືອດ້ານວິຊາການຕ່າງໆ.







## ໜ້າທີ່ຂອງອົງການການຄ້າໂລກ

1. ຄຸ້ມຄອງບັນດາສັນຍາການຄ້າ ຂອງອົງການການຄ້າໂລກ ໂດຍຜ່ານສະພາ ແລະ ຄະນະກຳມະການຕ່າງໆ ທີ່ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດພັນທະຂອງບັນດາປະເທດສະມາຊິກ.
2. ເປັນເວທີໃນການເຈລະຈາການຄ້າ ເພື່ອຫຼຸດຜ່ອນອຸປະສັກທາງການຄ້າ ລະຫວ່າງ ບັນດາປະເທດ ສະມາຊິກ ໃນການຄ້າ ດ້ານສິນຄ້າ, ການບໍລິການ, ຊັບສິນທາງປັນຍາ ແລະ ບັນຫາອື່ນໆ.
3. ເປັນເວທີປຶກສາຫາລື ແລະ ການແກ້ໄຂຂໍ້ຂັດແຍ່ງທາງການຄ້າຂອງບັນດາປະເທດສະມາຊິກ.
4. ຕິດຕາມ ແລະ ກວດກາ ລະບົບການຄ້າສາກົນ ໂດຍຜ່ານກົນໄກການທົບທວນນະໂຍບາຍການຄ້າ.
5. ໃຫ້ຄວາມຊ່ວຍເຫຼືອດ້ານວິຊາການ ແກ່ປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ ໃຫ້ໄດ້ຮັບຜົນປະໂຫຍດຈາກການຄ້າສາກົນ.
6. ຮ່ວມມືກັບ ອົງການຈັດຕັ້ງສາກົນອື່ນໆ ເຊັ່ນ: ກອງທຶນສາກົນ ແລະ ທະນາຄານໂລກ ເພື່ອຮັບປະກັນຄວາມສອດຄ່ອງ ຂອງການວາງນະໂຍບາຍເສດຖະກິດໂລກ.

## ສັນຍາທີ່ສຳຄັນ ຂອງອົງການການຄ້າໂລກ

ກວມເອົາ 3 ຂົງເຂດການຄ້າ ຄື:

### I. ການຄ້າດ້ານສິນຄ້າ

- ສັນຍາລວມວ່າດ້ວຍ ອັດຕາພາສີ ແລະ ການຄ້າ (GATT) ປີ 1994 (ສັນຍາແມ່ບົດ)
- ສັນຍາວ່າດ້ວຍ ກະສິກຳ
- ສັນຍາວ່າດ້ວຍ ສຸຂານາໄມ ແລະ ສຸຂານາໄມພືດ
- ສັນຍາວ່າດ້ວຍ ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ
- ສັນຍາວ່າດ້ວຍ ການປະເມີນມູນຄ່າພາສີ
- ສັນຍາວ່າດ້ວຍ ການກວດກາກ່ອນການສົ່ງອອກ
- ສັນຍາວ່າດ້ວຍ ລະບຽບການແຫຼ່ງກຳເນີດສິນຄ້າ
- ສັນຍາວ່າດ້ວຍ ມາດຕະການລົງທຶນທີ່ຕິດພັນກັບການຄ້າ
- ສັນຍາວ່າດ້ວຍ ຂັ້ນຕອນການອະນຸຍາດນຳເຂົ້າ
- ສັນຍາວ່າດ້ວຍ ມາດຕະການປົກປ້ອງຊົ່ວຄາວ
- ສັນຍາວ່າດ້ວຍ ການຕ້ານການທຸ່ມຕະຫຼາດ
- ສັນຍາວ່າດ້ວຍ ການຖົມຊຸ້ມ ແລະ ມາດຕະການຕອບໂຕ້

### II. ການຄ້າດ້ານການບໍລິການ

- ສັນຍາລວມວ່າດ້ວຍ ການຄ້າດ້ານການບໍລິການ (GATS)

### III. ການຄ້າທີ່ຕິດພັນກັບຊັບສິນທາງປັນຍາ

- ສັນຍາລວມວ່າດ້ວຍ ການຄ້າດ້ານການບໍລິການ (GATS)

## ຄວາມຄືບໜ້າໃນການເຂົ້າເປັນສະມາຊິກຂອງລາວ

ອີງໃສ່ມະຕິກອງປະຊຸມໃຫຍ່ ຄັ້ງທີ IV-VIII ຂອງພັກໃນການສືບຕໍ່ປະຕິບັດແນວທາງການຕ່າງປະເທດທີ່ສ້າງສັນ, ເຊື່ອມໂຍງເຂົ້າສາກົນຢ່າງຕັ້ງໜ້າ ແລະ ເປັນເຈົ້າການ, ປະຕິບັດນະໂຍບາຍແບບຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍຮູບແບບບົນພື້ນຖານ ເຄົາລົບເອກະລາດ, ອະທິປະໄຕ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ກະຊວງອຸດສາຫະກຳ ແລະ ການຄ້າໄດ້ຮ່ວມມືກັບ ກະຊວງຂະແໜງການຕ່າງໆ ເປັນເຈົ້າການເຄື່ອນໄຫວວຽກງານການເຊື່ອມໂຍງ ເສດຖະກິດສາກົນ ທັງໃນກອບສອງຝ່າຍ, ພາກພື້ນ ແລະ ຫຼາຍຝ່າຍຢ່າງຕັ້ງໜ້າ.

ສປປ ລາວ ໄດ້ສະໝັກເຂົ້າເປັນສະມາຊິກຂອງອົງການ ການຄ້າໂລກ ໃນເດືອນ 07/1997 ແລະ ໄດ້ຖືກຮັບຮອງໃນຖານະເປັນປະເທດຜູ້ສັງເກດການ ແລະ ສ້າງຕັ້ງໜ່ວຍປະຕິບັດງານ